# ຊັບພະຍາກອນມະນຸດເພື່ອການພັດທະນາແບບຍືນຍົງ

ບົດລາຍງານກ່ຽວກັບຜົນການສົນທະນາ ກຸ່ມທີ 2

*ລາຍງານໂດຍ ທ່ານ ປອ. ສີສຸກ ວົງວິຈິດ*

*ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ*

# ສິ່ງທ້າທາຍທີ່ສຳຄັນ

1. **ຕົວຊີ້ບອກຂອງຂະແໜງການທີ່ຍັງມີຄວາມຫຼ້າຊ້າ**

- **ໂອກາດ/ການເຂົ້າເຖິງ** ການສຶກສາ ແລະ ການຝຶກອົບຮົມວິຊາຊີບ, ສາທາລະນະສຸກ ແລະ ຂໍ້ມູນຂ່າວສານ ແລະ ການບໍລິການ ທີ່ຍັງບໍ່ມີຄວາມເທົ່າທຽມ, ໂດຍສະເພາະສຳລັບປະຊາກອນທີ່ທຸກຍາກ ແລະ ທີ່ມີຄວາມສ່ຽງ (ເຊັ່ນ: ຄົນພິການ, ກຸ່ມຄົນດ້ອຍໂອກາດ…)
- **ການສຶກສາ:** ຜົນໄດ້ຮັບການຮຽນຮູ້ຂອງນັກຮຽນຍັງຕໍ່າ, ການເຂົ້າໂຮງຮຽນໃນການສຶກສາກ່ອນໄວຮຽນຍັງຕໍ່າ, ອັດຕາການປະລະການຮຽນເພີ່ມຂຶ້ນ
- **ສາທາລະນະສຸກ:** ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກ ແລະ ລວງສູງຕໍ່າກວ່າມາດຕະຖານ ຍັງສູງ ແລະ ອັດຕາການຄອບຄຸມຂອງວຽກງານປະກັນສຸຂະພາບ ຍັງບໍ່ກວ້າງຂວາງ;
- **ສັງຄົມ:** ການຄຸ້ມຄອງດ້ານປະກັນສັງຄົມສຳລັບແຮງງານນອກລະບົບ ແລະ ຜູ້ທີ່ປະກອບອາຊີບດ້ວຍຕົນເອງ ຍັງຕໍ່າ, ອັດຕາການໃຊ້ຄວາມຮຸນແຮງຕໍ່ເດັກ ແລະໄວໜຸ່ມ/ການແຕ່ງງານກ່ອນໄວອັນຄວນ ຍັງສູງ

# ສິ່ງທ້າທາຍທີ່ສຳຄັນ (ຕໍ່)

2. **ການຈັດສັນຊັບພະຍາກອນທີ່ຍັງບໍ່ພຽງພໍ ແລະ ບໍ່ມີປະສິດທິພາບ ໂດຍສະເພາະ ທາງດ້ານງົບປະມານ ແລະ ຊັບພະຍາກອນມະນຸດ**

- **ການຈັດສັນງົບປະມານຂອງລັດໃຫ້ແກ່ຂະແໜງການສຶກສາ, ສາທາລະນະສຸກ ແລະ ການປົກປ້ອງສັງຄົມ ຍັງຈຳກັດ ເມື່ອທຽບໃສ່ກົດໝາຍ:**
    - **ການສຶກສາ:** ສັດສ່ວນງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ຊຶ່ງເປັນງົບປະມານຮັບໃຊ້ການປັບປຸງຄຸນນະພາບການສຶກສາ ແມ່ນມີໜ້ອຍ
    - **ສາທາລະນະສຸກ:** ຄວາມຍືນຍົງຂອງແຜນງານປະກັນສຸຂະພາບແຫ່ງຊາດ ຍັງເປັນສິ່ງທ້າທາຍ; ມີຄວາມຈຳກັດທາງດ້ານງົບປະມານສຳລັບສິ່ງອຳນວຍຄວາມສະດວກດ້ານການແພດຂັ້ນພື້ນຖານ ແລະ ວັກຊີນ
- **ການຂາດເຂີນ ແລະ ການແຈກຢາຍຄູ ແລະ ພະນັກງານແພດໝໍ ທີ່ມີຄຸນວຸດທິ/ຄວາມສາມາດ + ການລົງທຶນໃສ່ການພັດທະນາວິຊາຊີບຄູ ທີ່ຍັງບໍ່ມີຄວາມເທົ່າທຽມ ແລະ ຄຸນນະພາບຂອງກຳລັງແຮງງານຍັງຕໍ່າ;**
- **ສັງຄົມ:** ການສ້າງກຳລັງແຮງງານ ຍັງບໍ່ສອດຄ່ອງກັບຄວາມຕ້ອງການດ້ານແຮງງານ ແລະ ໂຄງລ່າງພື້ນຖານສຳລັບການຝຶກອົບຮົມໃຫ້ແກ່ກຳລັງແຮງງານ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ຍັງບໍ່ໄດ້ມາດຕະຖານ, ມາດຕະການຄວາມປອດໄພໃຫ້ແກ່ຜູ້ອອກແຮງງານຍັງຕໍ່າ ແລະ ສິ່ງຈູງໃຈສຳລັບການມີສ່ວນຮ່ວມຂອງກຳລັງແຮງງານ ແລະ ການພັດທະນາສີມືແຮງງານ ຍັງມີຈຳກັດ.

# ສິ່ງທ້າທາຍທີ່ສຳຄັນ (ຕໍ່)

## 3. ການປະສານງານກັບຂະແໜງການ ແລະ ຄູ່ຮ່ວມງານອື່ນໆ ຍັງບໍ່ໄດ້ດີ

- ການສຶກສາ: ການສົ່ງເສີມການມີສ່ວນຮ່ວມກັບພໍ່ແມ່ນັກຮຽນ, ຊຸມຊົນ ແລະ ພາກເອກະຊົນຍັງຈຳກັດ;
- ສາທາລະນະສຸກ: ກອງປະຊຸມປະສານງານລະດັບວິຊາການກັບຄູ່ຮ່ວມພັດທະນາ ຍັງບໍ່ທັນໄດ້ຈັດປົກກະຕິທຸກໜ່ວຍງານ (TWGs), ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ ກໍຍັງຈຳກັດ;
- ສັງຄົມ: ກົດໝາຍວ່າດ້ວຍແຮງງານຍັງບໍ່ທັນຮັດກຸມ, ຄົບຖ້ວນ ແລະ ລ້າສະໄໝ ເພື່ອພັດທະນາກຳລັງແຮງງານໃຫ້ມີປະສິດທິຜົນ ແລະ ການປົກປ້ອງສັງຄົມໃນທົ່ວຂະແໜງການ, ການຄຸ້ມຄອງຂໍ້ມູນຍັງກະແຈກກະຈາຍ ຈຶ່ງເຮັດໃຫ້ການວາງແຜນນະໂຍບາຍ ແລະ ການຈັດສັນຊັບພະຍາກອນໃນທົ່ວຂະແໜງການ ບໍ່ມີປະສິດທິພາບເທົ່າທີ່ຄວນ.

# ຄຳແນະນຳ ແລະ ວິທີການໃນຕໍ່ໜ້າ

**ແຜນສະເພາະໜ້າ (ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9)**

1. **ການຈັດລຳດັບຄວາມສຳຄັນ ແລະ ການຫັນປ່ຽນກົນໄກການປະຕິບັດ ໂດຍນຳໃຊ້ວິທີການທີ່ມີຫົວຄິດປະດິດສ້າງ**

- **ເພີ່ມທະວີການນຳໃຊ້ລະບົບຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ (ເອກະສານຮັບໃຊ້ການຮຽນການສອນ, ຂໍ້ມູນຂ່າວສານດ້ານສຸຂະພາບ, ເຕັກໂນໂລຊີສຳລັບການກວດສຸຂະພາບ, ຂໍ້ມູນຂ່າວສານຕະຫຼາດແຮງງານ) ແລະ ເຊື່ອມໂຍງບັນດາຖານຂໍ້ມູນຕ່າງໆຂອງບັນດາຂະແໜງການເຂົ້າກັນ ເພື່ອເປັນບ່ອນອີງໃນການຕັດສິນໃຈດ້ານນະໂຍບາຍ.**
- **ການສຶກສາ:** ໃຫ້ບູລິມະສິດໃນການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງ (CPD), ການຄຸ້ມຄອງໂຮງຮຽນທີ່ເຂັ້ມແຂງ ແລະເພີ່ມທະວີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ, ແລະ ການແຈກຢາຍຄູສອນທີ່ມີຄວາມເທົ່າທຽມກັນ; ໃຫ້ຄວາມສຳຄັນຕໍ່ການສຶກສາໄວເດັກ ແລະ ປະຖົມສຶກສາ
- **ສາທາລະນະສຸກ:** ສຸມໃສ່ຊັບພະຍາກອນໃສ່ໂຄງການທີ່ສຳຄັນ, ລົບລ້າງການຊ້ຳຊ້ອນ ແລະ ນຳໃຊ້ເຕັກໂນໂລຢີທີ່ທັນສະໄໝ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນການບໍລິການ
- **ສັງຄົມ:** ປັບປຸງກົດໝາຍວ່າດ້ວຍແຮງງານໃຫ້ມີປະສິດທິຜົນ; ຂະຫຍາຍການຄຸ້ມຄອງປະກັນສັງຄົມ ແລະ ມາດຕະການໃນການປົກປ້ອງສັງຄົມ; ກໍ່ສ້າງພື້ນຖານໂຄງລ່າງ, ສ້າງມາດຕະຖານແຫ່ງຊາດ; ປັບປຸງເງື່ອນໄຂການເຮັດວຽກ; ພັດທະນາສີມືແຮງງານຕາມຄວາມຕ້ອງການຕົວຈິງຂອງວຽກງານ ແລະ ຕຳແໜ່ງງານຂອງຜູ້ໃຊ້ແຮງງານ ດ້ວຍວິທີການທີ່ທັນສະໄໝ, ວ່ອງໄວ ແລະ ໂປ່ງໃສ

# ແຜນສະເພາະໜ້າ (ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9)

2. **ຮັບປະກັນໃຫ້ການສະໜັບສະໜູນຈາກພາຍນອກ (ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ ແລະ ອື່ນໆ) ສອດຄ່ອງກັບບູລິມະສິດຂອງລັດຖະບານ ແລະ ເພີ່ມທະວີການຮ່ວມມືໂດຍຜ່ານກົນໄກການປະສານງານຢ່າງເປັນທາງການຂອງລັດຖະບານ (ໜ່ວຍງານວິຊາການຂອງຂະແໜງການ, ກອງປະຊຸມໂຕະມົນ) ໃນການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ.**

- **ການສຶກສາ:** ປະສານການໃຫ້ບູລິມະສິດສໍາລັບການຮຽນຮູ້ຂັ້ນພື້ນຖານ, ເສີມສ້າງຄວາມຮັບຮູ້ຂອງຊຸມຊົນ, ການສ້າງຄວາມເຂັ້ມແຂງ ແລະ ການມີສ່ວນຮ່ວມໃນການສົ່ງເສີມການເຂົ້າຮຽນ, ການຊ່ວຍເຫຼືອດ້ານການຮຽນຮູ້ ແລະ ການພັດທະນາໂຮງຮຽນ; ຮັບປະກັນການຈັດສັນ & ນໍາໃຊ້ງົບປະມານໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ການນໍາໃຊ້ກອງທຶນພັດທະນາອາຊີວະສຶກສາ ຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບບູລິມະສິດດ້ານການສຶກສາ; ເພີ່ມທະວີການຮ່ວມມືກັບອົງການຈັດຕັ້ງທາງສັງຄົມ ແລະ ສູນກາງຊາວໜຸ່ມ ເພື່ອໃຫ້ຊາວໜຸ່ມ ແລະ ຊຸມຊົນເຂົ້າຮ່ວມໃນການພັດທະນາການສຶກສາ;
- **ສາທາລະນະສຸກ:** ເຊື່ອມສານແຜນງານການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາ ກັບແຜນງານບູລິມະສິດປະຈໍາປີ ແລະ ແຜນ 5 ປີຂອງຂະແໜງການ;
- **ສັງຄົມ:** ຮ່ວມກັນຕິດຕາມຊ່ອງຫວ່າງດ້ານຊັບພະຍາກອນ ແລະ ສ້າງຕັ້ງເວທີສໍາລັບການປຶກສາຫາລືກ່ຽວກັບການວາງແຜນການ ແລະ ແຜນງົບປະມານທີ່ອີງໃສ່ຂໍ້ມູນ.

# ໄລຍະຍາວ (ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 10)

1. **ລະດົມແຫຼ່ງທຶນເພີ່ມເຕີມຈາກພາຍໃນ ແລະ ຕ່າງປະເທດ, ພ້ອມທັງໃຫ້ພາກເອກະຊົນມີສ່ວນຮ່ວມໃນການພັດທະນາ ເພື່ອການສະໜອງທຶນແບບຍືນຍົງໃຫ້ແກ່ການພັດທະນາທຶນມະນຸດ, ໃນສະພາບທີ່ຜູ້ໃຫ້ທຶນອາດມີການປ່ຽນແປງ ແລະ ການຫຼຸດພົ້ນຈາກປະເທດດ້ອຍພັດທະນາ.**

- **ສ້າງຄວາມຫຼາກຫຼາຍດ້ານແຫຼ່ງທຶນ ດ້ວຍນຳໃຊ້ນະວັດຕະກຳແບບໃໝ່**, ລວມທັງການມີສ່ວນຮ່ວມຂອງພາກເອກະຊົນ, ສ້າງກົນໄກການສະໜອງທຶນຕົນເອງສຳລັບການສຶກສາ ແລະ ການປິ່ນປົວສຸຂະພາບ, ການຮ່ວມທຶນຂອງຜູ້ໃຫ້ທຶນ, ການສະໜອງທຶນຂອງຜູ້ໃຫ້ທຶນໃໝ່, ສ້າງລະບົບການເງິນທີ່ໄດ້ມາດຕະຖານ ເພື່ອໂປ່ງໃສໃນການລາຍງານ ແລະ ການຄຸ້ມຄອງງົບປະມານທີ່ມີປະສິດທິພາບ.

- ສົມທົບກັບຂະແໜງການທີ່ກ່ຽວຂ້ອງ, ພິເສດແມ່ນກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ, ສະພາແຫ່ງຊາດ ຈັດສັນງົບປະມານໃຫ້ພຽງພໍ ໃຫ້ແກ່**ຂະແໜງການສຶກສາ, ສາທາລະນະສຸກ ແລະ ສັງຄົມ ຕາມຄຳໝັ້ນສັນຍາຂອງລັດຖະບານ.**

- **ການສຶກສາ: ສ້າງຄວາມເຂັ້ມແຂງໃຫ້ແກ່ການຮຽນຮູ້ຂັ້ນພື້ນຖານ ລວມທັງ ທັກສະດ້ານອາລົມ ແລະສັງຄົມ;** ເສີມຂະຫຍາຍການສຶກສາສາຍອາຊີວະສຶກສາ ໃຫ້ສອດຄ່ອງກັບຄວາມຕ້ອງການ ຂອງຕະຫຼາດແຮງງານ, ແລະ ລະດົມຊັບພະຍາກອນເພື່ອຜົນໄດ້ຮັບການຈ້າງງານທີ່ດີຂຶ້ນ; ສົມທົບກັບກະຊວງການເງິນ ເພື່ອສະເໜີໃຫ້ມີສາລະບານງົບປະມານສະເພາະສຳລັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ເພື່ອປັບປຸງຄຸນນະພາບຂອງການສຶກສາ;
- **ສາທາລະນະສຸກ: ເພີ່ມພາສີສຸຂະພາບ ແລະ ແກ້ໄຂການຍົກເວັ້ນພາສີຢາສູບພາຍໃຕ້ສົນຍາໃບອະນຸຍາດການລົງທຶນ** ສຳລັບການປັບປຸງສຸຂະພາບ ແລະ ການສ້າງລາຍໄດ້ໃນສະພາບຂ້າມຜ່ານຂອງການປ່ຽນແປງຂອງຜູ້ໃຫ້ທຶນ (Gavi ຈາກ 2026 ແລະ ກອງທຶນໂລກ); ເສີມຂະຫຍາຍລະບົບປະກັນສຸຂະພາບແຫ່ງຊາດ ດ້ວຍກົນໄກການສະ ໜອງທຶນທີ່ເປັນເອກະລາດ ແລະ ຍືນຍົງ;
- **ສັງຄົມ:** ພິຈາລະນາການສະໜອງທຶນຮ່ວມກັນ ເພື່ອແກ້ໄຂບັນຫາການຂາດແຄນທາງດ້ານການເງິນແບບລວມສູນ ລວມທັງງົບປະມານຂອງລັດ ແລະ ງົບປະມານການຊ່ວຍເຫຼືອ;



- ຂໍຂອບໃຈ